


# ການນຳສະເໜີ ກິດຈະກຳແຄມແປນ ອອນລາຍ
# #HUGໂລກ #HUGດິນຟ້າອາກາດ


**ນຳສະເໜີໂດຍ: ບຸນມະນີ ແກ້ວປະເສີດ**


**ວັນທີ: 18 ພະຈິກ (11) 2025**




# ພາບລວມ

- ຄວາມເປັນມາ
- ວິທີການ
- ຜົນໄດ້ຮັບ & KPI
- ສິ່ງທ້າທາຍ & ບົດຮຽນ
- ຂໍ້ສະເໜີແນະ




# ຄວາມເປັນມາ

- **ຈຸດປະສົງຫຼັກ ແຄມແປນ “HUG ໂລກ”** ເພີ່ມການຮັບຮູ້ ແລະ ກະຕຸ້ນການມີສ່ວນຮ່ວມ ໃນຫົວຂໍ້ ປ່ຽນແປງສະພາບດິນຟ້າອາກາດ ຜ່ານຮູບພາບ ຫຼື ວິດີໂອ. ໂດຍການສ້າງເນື້ອຫາຈາກຜູ້ໃຊ້ສື່ສັງຄົມອອນລາຍທົ່ວໄປ (User-Generated Content).
- **ຜູ້ສະໜັບສະໜູນ:** CARE International in Lao PDR
- **ຮ່ວມຈັດຕັ້ງປະຕິບັດ:** APL+, ຮ່ວມໃຈອາສາສະໝັກ ແລະ ສູນພັດທະນາຊົນນະບົດ.
- **ງົບປະມານ:** 15.000.000 ກີບ




# ວິທີການ

- **ພວກເຮົາຈັດ UGC Challenge (User-Generated Content)** ໃຫ້ຄົນກອດສິ່ງທີ່ຮັກ ໂດຍຕ້ອງສະແດງໃຫ້ເຫັນເຖິງຄວາມງົດງາມຂອງສະພາບແວດລ້ອມໃນ ສປປ ລາວ.
- **ເນັ້ນການແບ່ງປັນ** ຜ່ານ Facebook, IG, TikTok, TWITTER.
- **ໃຊ້ Hashtag ເປັນກາງ**: #HUGໂລກ #HUGດິນຟ້າອາກາດ
- **ແຄມແປນ ອອກແບບໃຫ້ຄົນເຮັດງ່າຍ** ແລະ ຊ່ວຍເຮັດໃຫ້ຂ່າວກະຈາຍໄວ.
- **ຈຸດໃຈຄວາມສຳຄັນ:** “ການກອດ” = ການປົກປ້ອງ.

# ການໂຄສະນາ


ອົງການຈັດຕັ້ງສັງຄົມລາວ/Lao Civil Society Organizations
21 ພຸດສະຈິກາຍົນ 2021
ເຊີນຊວນທຸກທ່ານເຂົ້າຮ່ວມ Challenge ກະຕິກາມີດັ່ງນີ້ :
ສົ່ງຮູບພາບ ແລະ ວີດີໂອເຂົ້າຮ່ວມ Challenge... ດູເພີ່ມເຕີມ
ຊວນທຸກທ່ານຮ່ວມ
Challenge
HuG ໂລກ
ສົ່ງຮູບພາບ
ສົ່ງວິດີໂອ
ມີສະຖານທີ່ໃດທີ່ທ່ານຢາກກອດບໍ່?
ນຳສະເໜີ
'HUG ໂລກ' challenge
ຮ່ວມເປັນກະບອກສຽງ
ໃນການເປັນປ່ຽນແປງທີ່ດີຂຶ້ນ
" HUG ໂລກ " challenge ແມ່ນຫຍັງ?
ກະຕິກາການເຂົ້າຮ່ວມ
ປິດຮັບ 2 ທັນວາ 2021
info@rda.org.la
Rural Development Agency
020 52 646 124
15 ລ້ານກີບ
ກິດຈະກຳ"HUG ໂລກ" 2021 ມີ 3 ຫົວຂໍ້
+7


ຊວນທຸກທ່ານຮ່ວມ
Challenge
HuG ໂລກ
ສົ່ງຮູບພາບ
ສົ່ງວິດີໂອ
ເພື່ອຊິງເງິນລາງວັນຫຼາຍກວ່າ 15.000.000 ກີບ
ມີສະຖານທີ່ໃດທີ່ທ່ານຢາກກອດບໍ່?
Rural Development Agency RDA.
2 ພຶດສະຈິກາຍົນ 2021
#HUGໂລກ
ແກ້ໄຂ
ໂປຣໂມທໂພສຕ໌
ກະຕິກາການເຂົ້າຮ່ວມ
ປິດຮັບ 2 ທັນວາ 2021
info@rda.org.la
Rural Development Agency
020 52 646 124
15 ລ້ານກີບ
Rural Development Agency RDA.
5 ພຶດສະຈິກາຍົນ 2021
https://fb.watch/94hx8L71S9/

Rural Development Agency RDA.
ເผยแพร่โดย VS'eng VA · 21 พฤศจิกายน 2021 ·

No: 043
ຮູບພາບໂດຍ FB: Dar Southam
ຮູບພາບ: ທຳມະຊາດບຳບັດຈິດໃຈ💚☘️☘
ວັດປ່າພູຜາຈັນ ເປັນວັດປ່າທີ່ຕັ້ງຢູ່ເທິງພູ ໜ້າຜາຫີນ ທີ່ສະຫງົບງຽບ
ທີ່ຈະຂຶ້ນໄປວັດໄດ້ ຕ້ອງໄດ້ໃຊ້ກຳລັງຂາ ໄຕ່ໜ້າຜາຫີນຂຶ້ນໄປ ຫຼື ຍ່າງອ
ພູເຂົາຄອຍ, ຍ່າງຜ່ານປ່າ ຂຶ້ນພູ ປະມານ 3 ກິໂລ ຈະຮອດສັນພູເຂົາ
ຄູບາເພິ່ນໄດ້ເອົາພຣະໄປປະດິດສະຖານຢູ່ເທິງສະຫງ່າງາມ ນັກຍ່າງປ່າ
ໄດ້. ຈາກຈຸດນີ້, ເຮົາສາມາດເບິ່ງເຫັນທິວທັດລະດັບ 5 ດາວ ທີ່ປະກອບ
ອ່າງນ້ຳງື່ມສີຟ້າກວ້າງໃຫຍ່ສຸດສາຍຕາ ເບິ່ງແລ້ວເຢັນຕາຜ່ອນຄາຍດີ
ແຜ່ນທີ່: https://goo.gl/maps/eaMCnnnTpVyv8ExQ9
Location: ວັດປ່າພູຜ່າຈັນ(ຜ່າລີ່ງ), ບ້ານນາເຜີຍ, ເມືອງທຸລະຄົມ,ແ
Video: https://youtu.be/OeXQ45Gy6mo
#HUGໂລກ #HUGດິນຟ້າອາກາດ
#ກອດແມ່ນ້ຳ #ກອດປ່າ #ກອດພູຜາ #ກອດທ້ອງຟ້າ
#CAREInternationalinLaoPDR
#HIVAIDSLaos
#HuamJaiAsasamak
#RuralDevelopmentAgency

# ການເກັບກຳຂໍ້ມູນ

**ຫົວຂໍ້: ການປ່ຽນແປງສະພາບດິນຟ້າອາກາດ**

1.ຄົ້ນຫາ #Hashtag ໃນ 4 Platforms.

2. ໃສ່ລະຫັດຜູ້ເຂົ້າຮ່ວມ

3.ແຊຣ ຮູບພາບຜູ້ເຂົ້າຮ່ວມ ລົງ FB page RDA.

# ເງື່ອນໄຂຄັດເລືອກ

**ຮູບພາບ**

ຄຸນນະພາບຂອງຮູບ, ສື່ຄວາມໝາຍ, ອົງປະກອບສິລະປະ.

**ວິດີໂອ**

ຄຸນນະພາບວິດີໂອ, ການຕັດຕໍ່, ການເລົ່າເລື່ອງ, ຄວາມດຶງດູດ.

**ຕົວຢ່າງພາບ No.31**

ຮູບພາບໂດຍ: Tot Xayyalasy

ຄຳບັນຍາຍພາບ:

ສາຍນ້ຳຂອງ ສາຍນ້ຳທີ່ອຸດົມສົມບູນໄປດ້ວຍຊີວະນາມາພັນຫຼາກຫຼາຍຊະນິດ ປຽບດັ່ງສາຍນ້ຳແຫ່ງຊີວິດ ກັບການຫາປາແບບທຳມະຊາດຂອງປະຊາຊົນຕາມລຳນ້ຳຂອງ ເຂດດອນຄອນ ແຂວງຈຳປາສັກ.

Rural Development Agency RDA.
ເຜຍແພร่โดย VS'eng VA · 9 พฤศจิกายน 2021 ·

No.031
ຮູບພາບໂດຍ FB: Tot Xayyalasy... **ดูเพิ่มเติม**



Tot Xayyalasy
9 พฤศจิกายน 2021 ·

ສາຍນ້ຳຂອງ ສາຍນ້ຳທີ່ອຸດົມສົມບູນໄປດ້ວຍຊີວະນາໆພັນຫຼາກຫຼາຍຊະນິດ ປຽບດັ່ງສາຍນ້ຳແຫ່ງຊີວິດ ກັບການຫາປາແບບທຳມະຊາດຂອງປະຊາຊົນຕາມລຳນ້ຳຂອງ ເຂດດອນຄອນ ແຂວງຈຳປາສັກ
#ກອດແມ່ນ້ຳ #HUGໂລກ #HUGດິນຟ້າອາກາດ

# ຮູບພາບຕົວຢ່າງ ຜູ້ເຂົ້າຮ່ວມ

Rural Development Agency RDA.
เผยแพร่โดย VS'eng VA · 12 พฤศจิกายน 2021 ·

No.036
ຮູບພາບໂດຍ FB: ວຽງຄຳ ຈຸ່ມມະວົງ... **ดูเพิ่มเติม**





Fon Saophasith
15 พฤศจิกายน 2021 ·

"ເຮົາຮັກໂລກ ໂລກກໍຮັກເຮົາ"
ພິກັດ: ບ້ານ.ດົງ , ແຂວງ ຫົວພັນ
#hugໂລກ
#hugດິນຟ້າອາກາດ
#ກອດແມ່ນ້ຳ #ກອດປ່າ #ກອດພູຜາ
#CAREInternationalinLaoPDR
#HIVAIDSLaos
#HuamJaiAsasamak... **ดูเพิ่มเติม**

4

ถูกใจ แสดงความคิด

ยังไม่มีความคิดเ

แสดงความคิดเห็นในชื่อ Rura

# ຜົນໄດ້ຮັບ & KPI

## Key Performance Indicator (KPI)




- **ການເຂົ້າເຖິງ Reach**: ໝາຍຖຶງຈຳນວນຜູ້ຄົນ (Unique Users) ທີ່ເຫັນໂພສຂອງທ່ານຢ່າງໜ້ອຍ ໜຶ່ງຄັ້ງ.
- **ການສະແດງຜົນ Impressions**: ໝາຍເຖິງ ຈຳນວນເທື່ອທັງໝົດ ທີ່ໂພສຂອງທ່ານຖືກສະແດງ ຢູ່ໃນໜ້າຈໍຂອງຜູ້ຊົມ.
- **ການມີສ່ວນຮ່ວມ Engagements**: ໝາຍເຖິງ ຈຳນວນຄັ້ງທັງໝົດ ທີ່ຜູ້ຊົມມີປະຕິກິລິຍາກັບໂພສ ລວມມີ Like/React, Comment, Share, Click ໃສ່ຮູບພາບ/ວິດີໂອ, Click ໃສ່ Link, ແລະອື່ນໆ.
- **ການສົ່ງຮູບ UGC Submissions**: ຈຳນວນຜົນງານ ທີ່ຜູ້ຊົມສົ່ງເຂົ້າຮ່ວມການແຂ່ງຂັນ




# ສິ່ງທ້າທາຍ

- ການວັດແທກການເຂົ້າເຖິງ: ການນັບຈຳນວນຜູ້ເຂົ້າຮ່ວມຕົວຈິງອາດມີຄວາມຊັບຊ້ອນ ເນື່ອງຈາກຜູ້ເຂົ້າຮ່ວມສາມາດໂພສໄດ້ຫຼາຍຊ່ອງທາງ ແລະ ການໃຊ້ Hashtag ທີ່ອາດມີຄວາມຜິດພາດ.

- ໄລຍະເວລາໃນການເຮັດກິດຈະກຳສັ້ນ

- ການຄັດເລືອກຜູ້ຊະນະ: ດ້ວຍຈຳນວນຜູ້ເຂົ້າຮ່ວມຫຼາຍ, ການຄັດເລືອກຜູ້ຊະນະຕາມເງື່ອນໄຂຄຸນນະພາບ ຂອງຮູບພາບ/ວິດີໂອ ແລະ ຂໍ້ຄວາມ ທີ່ນຳສະເໜີອາດໃຊ້ເວລາ.

- ການເຂົ້າເຖິງຂໍ້ມູນຂ່າວສານ: ຜູ້ເຂົ້າຮ່ວມທີ່ຢູ່ນອກເຂດຕົວເມືອງອາດມີຂໍ້ຈຳກັດໃນການເຂົ້າເຖິງຂໍ້ມູນ ຫຼື ການອັບໂຫຼດຮູບພາບ/ວິດີໂອທີ່ມີຄຸນນະພາບສູງ.




# ບົດຮຽນທີ່ຖອດຖອນໄດ້

**1. ກຳນົດຫົວຂໍ້ຍ່ອຍ/ປະເພດລາງວັນເພີ່ມ:**

- ເພີ່ມປະເພດລາງວັນສຳລັບ "ສະຖານທີ່ທີ່ບໍ່ຄ່ອຍມີຄົນຮູ້ຈັກ" ເພື່ອສົ່ງເສີມການຄົ້ນພົບສະຖານທີ່ໃໝ່ໆ.
- ເພີ່ມປະເພດລາງວັນ "ເລື່ອງເລົ່າທີ່ປະທັບໃຈທີ່ສຸດ" ເພື່ອເນັ້ນຄວາມສຳພັນລະຫວ່າງຄົນກັບທຳມະຊາດ.

**2. ປັບປຸງວິທີການເຂົ້າຮ່ວມ:**

- ກຳນົດໃຫ້ຜູ້ເຂົ້າຮ່ວມລົງທະບຽນຜ່ານ Google Form ຫຼື ເວັບໄຊສະເພາະ ເພື່ອໃຫ້ງ່າຍຕໍ່ການເກັບກຳຂໍ້ມູນ.
- ກຳນົດການໃຊ້ Hashtag ດຽວ ແລະ ຊັດເຈນຂຶ້ນ ເພື່ອຕິດຕາມການເຂົ້າຮ່ວມໄດ້ງ່າຍ.

**3. ຂະຫຍາຍການໂຄສະນາ ແລະ ການຈັດຕັ້ງປະຕິບັດ:**

- ຮ່ວມມືກັບອົງການຈັດຕັ້ງສັງຄົມ (CSOs) ຫຼື ສະຫະພັນຊາວໜຸ່ມໃນແຂວງຕ່າງໆ ເພື່ອຊ່ວຍເຜີຍແຜ່ຂໍ້ມູນໄປສູ່ຊົນນະບົດ ແລະ ກຸ່ມເປົ້າໝາຍທີ່ກວ້າງຂວາງກວ່າເກົ່າ.
- ສ້າງວິດີໂອແນະນຳການເຂົ້າຮ່ວມ ເພື່ອຫຼຸດຜ່ອນການເຂົ້າໃຈຜິດພາດ.

# ຂໍ້ສະເໜີແນະ

## ເພື່ອແກ້ໄຂບັນຫາການຕິດຕາມ ແລະ ເກັບກຳຂໍ້ມູນ ຈະຕ້ອງນຳໃຊ້ 2 ຂັ້ນຕອນຫຼັກ

ການໂພສຜົນງານ (ສື່ສັງຄົມອອນລາຍ) ແລະ ການລົງທະບຽນຢ່າງເປັນທາງການ (Google Form) ຜູ້ເຂົ້າຮ່ວມ ຕ້ອງລົງທະບຽນຜົນງານຜ່ານ Google Form ສະເພາະ ພາຍຫຼັງການໂພສລົງສື່ສັງຄົມອອນລາຍ.

- ຂໍ້ມູນທີ່ຕ້ອງການ: ຊື່-ນາມສະກຸນ, ເບີໂທ, ຊ່ອງທາງຕິດຕໍ່. Link ຂອງໂພສທີ່ເຂົ້າຮ່ວມການແຂ່ງຂັນ (Link ຕົ້ນສະບັບ). ໝວດໝູ່ທີ່ເລືອກເຂົ້າຮ່ວມ (ຮູບພາບ ຫຼື ວິດີໂອ). ຫົວຂໍ້/ຄຳບັນຍາຍສັ້ນໆກ່ຽວກັບຄວາມປະທັບໃຈໃນສະຖານທີ່ນັ້ນ.

## ແຜນການສື່ສານ ແລະ ການໂຄສະນາ

- ການຮ່ວມມືກັບຜູ້ມີອິດທິພົນ (Influencers): ເຊີນບຸກຄົນທີ່ມີຊື່ສຽງໃນສັງຄົມ ຫຼື ນັກຖ່າຍພາບ/ນັກທ່ອງທ່ຽວ ເພື່ອຊ່ວຍໂຄສະນາ.
- ສື່ສິ່ງພິມ: ຈັດພິມໂປສເຕີ/ແຜ່ນພັບ ໂຄສະນາຜ່ານຄູ່ຮ່ວມງານ ເພື່ອເຜີຍແຜ່ໄປຍັງແຂວງຕ່າງໆ.
- ສື່ວິດີໂອ: ສ້າງວິດີໂອແນະນຳ ວິທີການເຂົ້າຮ່ວມແບບຂັ້ນຕອນ (ລວມທັງວິທີການລົງທະບຽນໃນ Form) ເພື່ອປ້ອງກັນຄວາມສັບສົນ.

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ໄວໜຸ່ມໃນການດ

# ຂໍຂອບໃຈ

# Q & A

ສູນພັດທະນາຊົນນະບົດ
RURAL DEVELOPMENT AGENCY

More information and contact

Bounmany Keopaseuth
MEAL of Rural Development Agency (RDA)
Email: bounmany@rdalaos.org
Tel/Whatsapp: 856-20-915 222 49